CHAMPASING. (2023). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 9. Issue 2. Apr – Jun 2023. Page 123 – 129

# ປັດໄຈທີ່ສົ່ງຜົນຕໍ່ການດໍາເນີນທຸລະກິດຟາມໄກ່ຂອງຜູ້ປະກອບການພາຍໃນແຂວງຫຼວງພະບາງ

**ສຸລິຍາ ຈໍາປາສິງ*, ທິບພາວັນ ດວງວິໄລແກ້ວ, ພອນປະສິດ ຄົມທະວົງ, ສັງທອງ ສີຟອງໄຊ**

*ພາກວິຊາບໍລິຫານທຸລະກິດ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ, ມະຫາວິທະຍາໄລສຸພານຸວົງ, ສປປ ລາວ*

***ຕິດຕໍ່ພົວພັນ:** ຊື່ ແລະ ນາມສະກຸນ ສຸລິຍາ ຈໍາປາສິງ, ຫ້ອງການແຜນການ ແລະ ການລົງທຶນ ເມືອງຊຽງເງິນ, ແຂວງຫຼວງພະບາ, ໂທ: + 856 20 5989 9299, ອີເມວ: yachampasing81@gmail.com*

***ຂໍ້ມູນບົດຄວາມ:***
*ການສົ່ງບົດ: 28 ມີນາ 2023*
*ການປັບປຸງ: 11 ພຶດສະພາ 2023*
*ການຕອບຮັບ: 25 ພຶດສະພາ 2023*

## ບົດຄັດຫຍໍ້

ການສຶກສາປັດໄຈທີ່ສົ່ງຜົນຕໍ່ການດໍາເນີນທຸລະກິດຟາມໄກ່ໄຂ່ຂອງຜູ້ປະກອບການພາຍໃນແຂວງຫຼວງພະບາງ, ໃນການສຶກສາຄັ້ງນີ້ມີຈຸດປະສົງ 1) ສຶກສາການດໍາເນີນທຸລະກິດຟາມໄກ່ຂອງຜູ້ປະກອບການພາຍໃນແຂວງ ແລະ 2) ສຶກສາປັດໄຈທີ່ສົ່ງຜົນຕໍ່ການດໍາເນີນທຸລະກິດຟາມໄກ່ໄຂ່ຂອງຜູ້ປະກອບການພາຍໃນແຂວງຫຼວງພະບາງ. ມີຈໍານວນປະຊາກອນທີ່ແນ່ນອນໃນການກໍານົດກຸ່ມຕົວຢ່າງໂດຍຄໍານວນຈາກສູດ Krejcie ແລະ Morgan (1970) ໄດ້ກຸ່aaມຕົວຢ່າງທັງໝົດ 30 ຕົວຢ່າງເຊິ່ງເປັນຜູ້ປະກອບການທຸລະກິດຟາມໄກ່ໄຂ່ ແລະ ຟາມລ້ຽງສັດປີກພາຍໃນແຂວງຫຼວງພະບາງ. ໂດຍຜ່ານຂະບວນການຮວບຮວມຂໍ້ມູນຈາກຜູ້ຕອບແບບສອບຖາມທີ່ເປັນຜູ້ປະກອບການທັງໝົດ ແລະ ວິເຄາະຂໍ້ມູນດ້ວຍໂປແກມທາງສະຖິຕິ SPSS version 2022 ເພື່ອໃຫ້ໄດ້ຄ່າສະຖິຕິສໍາລັບຂໍ້ມູນພັນລະນາ ຄ່າຄວາມຖີ່, ເປີເຊັນ, ຄ່າສະເລ່ຍ, ຄ່າຜັນປຽ່ນມາດຖານ ແລະ ສະຖິຕິອານຸມານ ໄດ້ແກ່, one-way ANOVA, T-test, ການຄໍານວນຫາຄ່າສໍາປະສິດສະຫະສໍາພັນ ພົບວ່າປັດໄຈຂອງຜູ້ປະກອບການທີ່ເປັນເພດຊາຍກວມອັດຕາສ່ວນຫຼາຍກວ່າເພດຍິງເຖິງ 80%, ອາຍຸລະຫວ່າງ 46 - 55 ປີ ກວມ 36.7%, ລະດັບການສຶກສາຈົບມັດທະຍົມຕອນຕົ້ນກວມ 60%, ປະສົບການໃນການດໍາເນີນທຸລະກິດ 5 - 10 ປີ, ແຮງງານ 1 - 5 ຄົນກວມ 43.3%, ກູ້ຢືມສິນເຊື່ອທະນາຄານກວມ 76.7%, ມີທຶນໝູນວຽນທຸລະກິດລະຫວ່າງ 50 ລ້ານ - 100 ລ້ານກີບກວມ 50% ແລະ ລາຍຮັບສະເລ່ຍຕໍ່ເດືອນ 50 ລ້ານ - 100 ລ້ານກີບ ກວມ 43.3%. ປັດໄຈຂອງຜູ້ປະກອບການແມ່ນທຶນໝູນວຽນທຸລະກິດທີ່ມີອິດທິພົນ ແລະ ສົ່ງຜົນຕໍ່ການຂະຫຍາຍທຸລະກິດ $P<0.05$ ໃນການດໍາເນີນທຸລະກິດຟາມໄກ່. ການຄົ້ນຄວ້າພົບວ່າປັດໄຈການຜະລິດ ແລະ ປັດໄຈດ້ານການເງິນມີຜົນຕໍ່ປັດໄຈພາຍໃນດ້ວຍລະດັບຄວາມສໍາຄັນທາງສະຖິຕິ $P<0.05$. ສ່ວນປັດໄຈພາຍນອກບໍ່ມີຜົນຕໍ່ການດໍາເນີນທຸລະກິດຟາມໄກ່ຂອງຜູ້ປະກອບການພາຍໃນແຂວງຫຼວງພະບາງ.

**ຄໍາສັບສໍາຄັນ:** *ການດໍາເນີນງານ, ປັດໄຈພາຍໃນ ແລະ ພາຍນອກ, ຜູ້ປະກອບກາ*

# A study on Factors Affecting to the Chicken Layer's Farm Business Operations of Entrepreneur in Luang Prabang Province

**Souliya CHAMPASING[*], Thipphavanh DUANGVILAYKEO, Phonepasith KHOMTHAVONG and Sangthong SIFONGXAY**

*Department of Business Administration, Faculty of Economics and Tourism, Souphanouvong University, Lao PDR*

***[*]Correspondence:***
*Souliya CHAMPASING,*
*Xieng Nguen Planning Office,*
*Luang Prabang Province,*
*Tel: +856 20 5989 9299,*
*Email:*
*yachampasing81@gmail.com*

***Article Info:***
*Submitted: Mar 28, 2022*
*Revised: May 11, 2023*
*Accepted: May 25, 2023*

**Abstract**

A study on factors affecting to the chicken layer's farm business operations of entrepreneur in Luang Prabang Province aimed 1) to examine the chicken layer's farm business operation of entrepreneur and 2) to explore factors affecting the chicken layer's farm business operations of entrepreneur in Luang Prabang Province. The sample group was defined by Krejcie and Morgan (1970) and could obtain a total of 30 samples of laying hen and poultry farm in Luang Prabang Province. Through the process of collecting data from entrepreneurs the SPSS program was employed to obtain statistics of frequency, percentage, mean, and standard deviation and hypothesis testing of one-way ANOVA, T-test, Pearson Correlation, and multiple linear regression. result showed that the majority of respondents is male (80%); the largest proportion of each group was as follows: the age group between 46-55 years (36.70%), secondary school (60%), business experience between 5-10 years number of workforce between 1-5 person (43.30%), bank loans (76.70%), revolving capital between 50 million – 100 million (50%) and average monthly income 50 million - 100 million (43.33 %) and entrepreneurial factors related to the operating results of the chicken layer's farm business by having revolving capital as an influence below 0.05 ($P<0.05$). The internal factors affecting to the results of the chicken layer's farm business operations of entrepreneur in Luang Prabang Province consists of production and finance with a statistical significance level below 0.05 ($P<0.05$), and the chicken layer's farm business operations of entrepreneur in Luang Prabang Province were not affected by the external factors

**Keywords:** *Operation, Internal and External factors, Entrepreneur*

## 1. ພາກສະເໜີ

ແຂວງຫຼວງພະບາງ ມີປະຊາກອນທັງໝົດ 470 ພັນກວ່າຄົນ, ການຂະຫຍາຍຕົວຂອງເສດຖະກິດ ແລະ ສັງຄົມເຮັດໃຫ້ບັນດາຕົວເມືອງພາຍໃນແຂວງ ໄດ້ຮັບການພັດທະນາຢ່າງກ້າວກະໂດດ ຄວາມຕ້ອງການດ້ານສະບຽງອາຫານກໍ່ເພີ່ມຂຶ້ນທຸກປີ ເຮັດໃຫ້ການຜະລິດສະບຽງອາຫານພາຍໃນບໍ່ພຽງພໍຕໍ່ຄວາມຕ້ອງການ, ຈຶ່ງເພິ່ງພາອາຫານນຳເຂົ້າຈາກແຂວງອື່ນ ແລະ ຕ່າງປະເທດ, ນັ້ນກໍ່ເປັນປັດໃຈຕົ້ນເຫດທີ່ເຮັດໃຫ້ລາຄາຂອງສະບຽງອາຫານມີລາຄາແພງຂຶ້ນ. (ພະແນກແຜນການ ແລະ ການລົງທຶນ ແຂວງຫຼວງພະບາງ, 2021)

ການທົບທວນຄືນຂອງຄະນະສະເພາະກິດແຫ່ງຊາດ ແລະ ທ້ອງຖິ່ນທີ່ຈັດຕັ້ງປະຕິບັດມາດຕາການສະກັດກັ້ນການລະບາດຂອງເຊື້ອພະຍາດ Covid-19 ປີ 2020, ອັນເຮັດໃຫ້ເກີດການຄົ້ນຄວ້າທີ່ນຳໄປສູ່ການສຶກສາສິ່ງທ້າທາຍ ແລະ ກຽມຄວາມພ້ອມ ເພື່ອໃຫ້ຄວາມສຳຄັນຂອງການຜະລິດສະບຽງອາຫານ ທີ່ເປັນຮວ່ງໂຊອຸປະສົງ ແລະ ອຸປະທານຂາດບໍ່ໄດ້ນັ້ນ, ລັດຖະບານຄວນຊຸກຍູ້, ສົ່ງເສີມ, ກຳນົດນະໂຍບາຍ, ມາດຕະການຕ່າງໆ ເຂົ້າໃນການຜະລິດສະບຽງອາຫານໃຫ້ຫຼາຍຂຶ້ນ ແລະ ຈັດຕັ້ງປະຕິບັດໃຫ້ເປັນຮູບປະທຳ. (ກະຊວງກະສິກຳ ແລະ ປ່າໄມ້, 2018).

ການຮັບປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ການບໍລິໂພກທີ່ມີໂພສະນາການອັນຄົບຖ້ວນ ແລະ ປອດໄພຕໍ່ສຸກຂະພາບ ແມ່ນໜ້າວຽກທີ່ສຳ ຄັນຂອງການພັດທະນາ ທີ່ຕ້ອງເອົາໃຈໃສ່ຍົກລະດັບສະ ມັດຕະພາບຂອງການຜະລິດ, ສຸກຂະພາບຂອງປະຊາຊົນທາງດ້ານຮ່າງກາຍ, ຈິດໃຈ ແລະ ມັນສະໝອງຂອງໄວໜຸ່ມ ເປັນຕົ້ນແມ່ນສຸມໃສ່ກຸ່ມຜູ້ດ້ອຍໂອກາດ, ເດັກ ນ້ອຍ ແລະ ແມ່ຍິງໃນໄວຈະເລີນພັນ ເພື່ອປະກອບສ່ວນແກ້ໄຂຄວາມທຸກຍາກ , ຫຼຸດຜ່ອນການຂາດສານອາຫານໃນເດັກ, ທັງປັບປຸງດ້ານໂພສະນາການໃຫ້ແກ່ປະຊາຊົນ ແລະ ເປັນການຍົກລະດັບຊີວິດການເປັນຢູ່ຂອງເຂົາເຈົ້າໃຫ້ສູງຂຶ້ນ ຕາມທິດພັດທະນາທີ່ຍືນຍົງ. (ກະຊວງແຜນການ ແລະ ການລົງທຶນ, 2011)

ທຸລະກິດຟາມໄກ່ກໍ່ເປັນຫົວໜ່ວຍຜະລິດສະບຽງອາຫານໜຶ່ງທີ່ສຳຄັນ ເພາະວ່າຊີ້ນໄກ່ ແລະ ໄຂ່ໄກ່ ຖືເປັນແຫຼ່ງອາຫານໂປຕີນທີ່ມີຄຸນຄ່າ ຫາໄດ້ງ່າຍ ລາຄາຖືກ ແລະ ເປັນອາຫານເລີ່ມຕົ້ນມື້ທຳອິດຂອງທຸກໆເຊົ້າ ໂດຍສະເພາະແມ່ນເດັກນ້ອຍທີ່ຢູ່ໃນໄວຈະເລີນພັນ ຈຳເປັນຢ່າງຍິ່ງທີ່ຈະຕ້ອງໄດ້ຮັບຄຸນຄ່າສານອາຫານຈາກໄຂ່ໄກ່ ເນື່ອງຈາກມີປະໂຫຍດທາງໂພສະນາການທີ່ຈຳເປັນຫຼາຍຢ່າງ. (ກະຊວງກະສິກຳ ແລະ ປ່າໄມ້, 2015).

ການດຳເນີນທຸລະກິດຟາມໄກ່ໃນປັດຈຸບັນ ຜູ້ປະກອບການຖືກທ້າທາຍດ້ວຍຫຼາຍປັດໄຈ ທັງພາຍນອກ ແລະ ພາຍໃນ ທີ່ກະທົບໃສ່ການດຳເນີນທຸລະກິດເປັນຕົ້ນ: ສະພາບເສດຖະກິດການເງິນໂລກມີຄວາມຜັນຜວນ ປະເທດຂາດສະພາບຄ່ອງທາງດ້ານການເງິນ, ສະກຸນເງິນກີບອ່ອນຄ່າກະທົບເຖິງຕົ້ນທຶນຄ່າອາຫານລ້ຽງໄກ່; ສະພາບໂລກຮ້ອນ, ໄພພິບັດ, ດິນຟ້າອາກາດມີການປ່ຽນແປງ, ຂາດແຮງງານ; ອາຫານລ້ຽງສັດ, ແນວພັນ, ຢາວັກຊີນ ມີລາຄາແພງຂຶ້ນ ກະທົບໂດຍກົງຕໍ່ຕົ້ນທຶນການຜະລິດ. ການເຂົ້າເຖິງແຫຼ່ງທຶນຍາກ ແລະ ນະໂຍບາຍທາງດ້ານການປ່ອຍສິນເຊື່ອໃຫ້ແກ່ຜູ້ປະກອບການຍັງເຮັດບໍ່ໄດ້ເທົ່າທີ່ຄວນ. (ກະຊວງອຸດສາຫະກຳ ແລະ ການຄ້າ, 2017).

ຈາກເຫດຜົນດັ່ງກ່າວ, ຈຶ່ງເປັນທີ່ມາຂອງການສຶກສາວິໄຈ ທີ່ຜູ້ສຶກສາໃຫ້ຄວາມສຳຄັນ ແລະ ສົນໃຈທີ່ຈະສຶກສາກ່ຽວກັບ ປັດໄຈທີ່ສົ່ງຜົນຕໍ່ການດຳເນີນທຸລະກິດຟາມໄກ່ຂອງຜູ້ປະກອບການພາຍໃນແຂວງຫຼວງພະບາງ ເນື່ອງຈາກຂະແໜງການດັ່ງກ່າວຢູ່ໃນເປົ້າໝາຍສົ່ງເສີມການຜະລິດເປັນສິນຄ້າ ສ້າງເປັນທຸລະກິດຟາມຕົວແບບ ເພື່ອຕອບສະໜອງສະບຽງອາຫານໃຫ້ແກ່ສັງຄົມ.

ຈຸດປະສົງການສຶກສາຄັ້ງນີ້ແມ່ນ 1) ການດຳເນີນທຸລະກິດຟາມໄກ່ໄຂ່ຂອງຜູ້ປະກອບການພາຍໃນແຂວງຫຼວງພະບາງ ແລະ 2) ສຶກສາປັດໄຈທີ່ສົ່ງຜົນຕໍ່ການດຳເນີນທຸລະກິດຟາມໄກ່ໄຂ່ຂອງຜູ້ປະກອບການພາຍໃນແຂວງຫຼວງພະບາງ.

## 2. ອຸປະກອນ ແລະ ວິທີການ

### 2.1 ຂອບເຂດແນວຄິດໃນການສຶກສາ




### 2.2 ກຸ່ມຕົວຢ່າງ

ການກຳນົດປະຊາກອນ ແລະ ກຸ່ມຕົວຢ່າງແມ່ນກຳນົດເອົາຜູ້ປະກອບການທຸລະກິດຟາມໄກ່ໄຂ່ພາຍໃນ ຫຼວງພະບາງ ທີ່ມີຈຳນວນປະຊາກອນທີ່ແນ່ນອນໂດຍຄຳນວນຈາກຕາຕະລາງຂອງ Krejcie ແລະ Morgan (1970) ເຊິ່ງໄດ້ກຸ່ມຕົວຢ່າງ ຈຳນວນ 30 ຕົວຢ່າງ.

### 2.3 ເຄື່ອງມືໃນການຄົ້ນຄວ້າ

ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ ແມ່ນເປັນແບບສອບຖາມ ເຊິ່ງມີຂັ້ນຕອນການສ້າງ ດັ່ງນີ້:

1) ສຶກສາເອກະສານ, ແນວຄິດ ແລະ ທິດສະດີການດຳເນີນງານ, ປັດໄຈພາຍໃນ ແລະ ພາຍນອກ ແລະ ຜູ້ປະກອບການ ກັ່ນຕອງອອກມາເປັນຂອບເຂດແນວຄິດໃນການສຶກສາ.

2) ການສ້າງແບບສອບຖາມທີ່ຄວບຄຸມຕົວແປອິດສະຫຼະ ແລະ ຕົວແປຕາມ.

3) ນຳແບບສອບຖາມທີ່ໄດ້ຈາກການພິຈາລະນາຈາກຊ່ຽວຊານຜູ້ຊົງຄຸນນະວຸດ 5 ທ່ານໃນການທົດສອບຄວາມຖືກຕ້ອງຂອງເນື້ອໃນ (Content Validity) ໂດຍຫາຄ່າຄວາມສອດຄ່ອງລະຫວ່າງວັດຖຸປະສົງກັບແບບສອບຖາມ, ເພື່ອມາປັບປຸງສຳເລັດແລ້ວ, ນຳໄປທົດລອງກັບຜູ້ປະກອບການທຸລະກິດຟາມໄກ່. ໄດ້ຄ່າຄວາມສອດຄ່ອງ 0.87>0.5 ມາດຖານ IOC (Index of Item Objective Congruence). ແລະ ທົດສອບຄວາມໜ້າເຊື່ອຖື, ຄວາມເຊື່ອໝັ້ນຂອງແບບສອບຖາມໂດຍວັດຄ່າສຳປະສິດ Cronbach’s alpha coefficient ທີ່ມີຄ່າ >0.7, ຜົນການວິໄຈພົບວ່າ ປັດໄຈພາຍໃນຢູ່ທີ 0.78, ປັດໄຈພາຍນອກຢູ່ທີ 0.92 ແລະ ຜົນການດຳເນີນທຸລະກິດຢູ່ທີ່ 0.83.

### ວິທີການ

ຂະບວນການວິໄຈເພື່ອຮວບຮວມແບບສອບຖາມຈາກຜູ້ປະກອບການເຊິ່ງໃຊ້ເວລາຮວບຮວມຂໍ້ມູນເປັນເວລາໜຶ່ງເດືອນຈາກຜູ້ປະກອບການທຸລະກິດຟາມໄກ່ໄຂ່ທັງໝົດພາຍໃນ ແຂວງຫຼວງພະບາງ. ຫຼັງຈາກນັ້ນ, ນຳເອົາຂໍ້ມູນທີ່ຮວບຮວມມາໄດ້ມາຜ່ານການຮັບຮອງຈາກອາຈານທີ່ປຶກສາ, ແລ້ວນຳຂໍ້ມູນເຂົ້າໃນໂປແກມສຳເລັດຮູບທາງສະຖິຕິສຳລັບວິໄຈສັງຄົມສາດ Program SPSS version 2022. ໂດຍນຳໃຊ້ເຄື່ອງມືໃນການວິໄຈເພື່ອປະມວນຜົນຂໍ້ມູນຈາກແບບສອບຖາມປະກອບດ້ວຍ Frequency, Percentage, Mean, Standard deviation, T-test and one-way ANOVA, Pearson Correlation and Multiple Linear Regression.

## 3. ຜົນໄດ້ຮັບ

1. ຂໍ້ມູນຜູ້ປະກອບການ ຈາກຜົນການວິໄຈຂອງຜູ້ຕອບແບບສອບຖາມທັງໝົດເຫັນວ່າເພດຊາຍຈະກວມອັດຕາສ່ວນຫຼາຍກວ່າເພດຍິງເຖິງ 80%, ອາຍຸລະຫວ່າງ 46 - 55 ປີ ກວມ 36.7%, ລະດັບການສຶກສາຈົບມັດທະຍົມຕອນຕົ້ນ ກວມ 60%, ປະສົບການໃນການດໍາເນີນທຸລະກິດ 5 - 10 ປີ, ແຮງງານ 1 - 5 ຄົນກວມ 43.3%, ກູ້ຢືມສິນເຊື່ອທະນາຄານກວມ 76.7%, ມີທຶນໝູນວຽນທຸລະກິດລະຫວ່າງ 50 ລ້ານ - 100 ລ້ານກີບ ກວມ 50% ແລະລາຍຮັບສະເລ່ຍຕໍ່ເດືອນ 50 ລ້ານ - 100 ລ້ານກີບ ກວມ 43.3%.

2. ປັດໄຈພາຍໃນປະກອບມີ ຄ່າສະເລ່ຍຫຼາຍແມ່ນການຜະລິດ ($\bar{x}$= 4.42 ແລະ S.D= 0.51), ຮອງລົງມາແມ່ນການຕະຫຼາດ ($\bar{x}$= 4.41 ແລະ S.D= 0.42), ຖັດມາແມ່ນການບໍລິຫານ ($\bar{x}$= 4.25 ແລະ S.D= 0.38) ແລະສຸດທ້າຍແມ່ນການເງິນ ($\bar{x}$= 4.01 ແລະ S.D= 0.46).

3. ປັດໄຈພາຍນອກປະກອບມີ ຄ່າສະເລ່ຍຫຼາຍແມ່ນເຕັກໂນໂລຊີ ($\bar{x}$= 4.12 ແລະ S.D= 0.56), ຮອງລົງມາແມ່ນເສດຖະກິດ ($\bar{x}$= 4.10 ແລະ S.D= 0.57), ຖັດມາແມ່ນສັງຄົມ ແລະ ວັດທະນະທໍາ ($\bar{x}$= 3.75 ແລະ S.D= 0.63) ແລະ ສຸດທ້າຍແມ່ນການເມືອງ ($\bar{x}$= 3.34 ແລະ S.D= 0.66).

4. ຜົນຂອງການດໍາເນີນທຸລະກິດຟາມໄກ່ໄຂ່ຂອງຜູ້ປະກອບການພາຍໃນ ແຂວງຫຼວງພະບາງ ປະກອບມີ ຄ່າສະເລ່ຍຫຼາຍສຸດແມ່ນຍອດຂາຍ ($\bar{x}$=4.23 ແລະ S.D=0.44), ຮອງລົງມາແມ່ນການຂະຫຍາຍທຸລະກິດ ($\bar{x}$=4.15 ແລະ S.D=0.44) ແລະ ສຸດທ້າຍແມ່ນຜົນກໍາໄລ ($\bar{x}$=4.14 ແລະ S.D=0.44).

5. ການວິເຄາະຫາຄວາມສໍາພັນລະຫວ່າງຂໍ້ມູນຜູ້ປະກອບການກັບຜົນການດໍາເນີນທຸລະກິດໂດຍຈໍາແນກຄວາມສໍາພັນແຕ່ລະປັດໄຈຂອງຜູ້ປະກອບການ ດ້ວຍ Pearson Correlation ຜົນໄດ້ຮັບແມ່ນ ປັດໄຈທຶນໝູນວຽນທຸລະກິດມີຜົນຕໍ່ການຂະຫຍາຍທຸລະກິດ ໂດຍມີຄ່າ (P-value= 0.009 < 0.05; r= 2.896) ໃນການດໍາເນີນທຸລະກິດຟາມໄກ່ໄຂ່ຂອງຜູ້ປະກອບການ.

6. ການວິເຄາະຫາປັດໄຈພາຍໃນ ແລະ ປັດໄຈພາຍນອກ ປັດໄຈໃດມີຜົນຕໍ່ການດໍາເນີນທຸລະກິດຟາມໄກ່ໄຂ່ຂອງຜູ້ປະກອບການພາຍໃນ ແຂວງຫຼວງພະບາງ ດ້ວຍ Multiple Linear Regression ຜົນໄດ້ຮັບແມ່ນປັດໄຈພາຍໃນມີຜົນຕໍ່ຜົນການດໍາເນີນທຸລະກິດຟາມໄກ່ຂອງຜູ້ປະກອບການພາຍໃນ ແຂວງຫຼວງພະບາງ ປະກອບມີ ດ້ານການຜະລິດ (b= 0.409), ດ້ານການເງິນ (b= 0.314), ດ້ານການຕະຫຼາດ (b=-0.277) ແລະ ດ້ານບໍລິຫານ (b=-0.092), ທີ່ມີຄວາມຜັນແປຕໍ່ຜົນການດໍາເນີນທຸລະກິດ $R^2$ = 38.4% ແລະ ສາມາດຂຽນສົມຜົນພະຍາກອນໃນຮູບແບບຄະແນນດິບດັ່ງນີ້:

$$Y_{\text{ຜົນການດໍາເນີນທຸລະກິດ}} = 2.608_{\text{ຄ່າຄົງທີ່}} + .409^{**}_{\text{ປັດໄຈດ້ານການຜະລິດ}} + .341^{*}_{\text{ປັດໄຈດ້ານການເງິນ}}$$

ປັດໄຈພາຍນອກບໍ່ມີຜົນຕໍ່ຜົນການດໍາເນີນທຸລະກິດຟາມໄກ່ຂອງຜູ້ປະກອບການພາຍໃນ ແຂວງຫຼວງພະບາງ ປະກອບມີ ດ້ານການເມືອງ, ດ້ານເສດຖະກິດ, ດ້ານສັງຄົມ ແລະ ວັດທະນະທໍາ ແລະ ເຕັກໂນໂລຊີ.

## 4. ວິພາກຜົນ

ປັດໄຈຜູ້ປະກອບການມີ ເພດ, ອາຍຸ, ລະດັບການສຶກສາ, ປະສົບການ, ແຫຼ່ງທຶນ, ທຶນໝູນວຽນ, ລາຍຮັບ ແລະ ແຮງງານ. ເຫັນວ່າມີພຽງບາງປັດໄຈເທົ່ານັ້ນທີ່ມີຜົນເປັນຕົ້ນແມ່ນ ທຶນໝູນວຽນມີຜົນຕໍ່ການຂະຫຍາຍທຸລະກິດໃນການດໍາເນີນທຸລະກິດຟາມໄກ່ໄຂ່, ອາດເປັນຄວາມເຊື່ອສ່ວນບຸກຄົນໃນທ້ອງຖິ່ນທີ່ວ່າ ການເປັນຜູ້ປະກອບການບໍ່ຈໍາເປັນຕ້ອງມີລະດັບການສຶກສາສູງ ແລະ ໃນການດໍາເນີນທຸລະກິດຖ້າເຮົາມີທຶນໝູນວຽນທຸ ລະກິດຫຼາຍຂຶ້ນການຂະຫຍາຍຕົວຂອງທຸລະກິດກໍ່ເພີ່ມຂຶ້ນຕາມ.

ປັດໄຈພາຍໃນ ທີ່ປະກອບດ້ວຍ ການບໍລິຫານ, ການຕະຫຼາດ, ການຜະລິດ ແລະ ການເງິນ ມີຄວາມສໍາພັນກັບຜົນຂອງການດໍາເນີນທຸລະກິດ ເປັນຕົ້ນແມ່ນ ປັດໄຈທາງການຜະລິດ, ປັດໄຈທາງການເງິນ ມີຄວາມສໍາພັນທາງບວກ ແລະ ສົ່ງຜົນຕໍ່ການດໍາເນີນທຸລະກິດ ສອດຄ່ອງກັບງານວິໄຈຂອງ Adebayo & Adeola (2005) ທີ່ສຶກສາປັດໄຈທາງເສດຖະກິດ ແລະ ສັງຄົມທີ່ສົ່ງຜົນຕໍ່ຜູ້ລຽ້ງສັດປີກໃນເຂດປົກຄອງທ້ອງຖິ່ນເອຈີ່ໂບຂອງລັດໂອຊຸນປະເທດໄນຈີເລຍທະວີບອາຟຼິກກາ ໄດ້ພົບວ່າການສະໜັບສະໜູນລະດັບຊາດເພື່ອເສີມສ້າງການຜະລິດສັດປີກຄືປັດໃຈດ້ານການເງິນ ແລະ ປັດໄຈການຜະລິດ ເປັນສິ່ງທີ່ຕ້ອງໄດ້ຮັບການປັບປຸງ ແລະ ໃຫ້ຄວາມສໍາຄັນ. Thipsrirach (2013) ພະແນກສຶກສາສັດປີກ ມະຫາວິທະຍາໄລ ຣາດຊະມັງຄະລາ ເຕັກໂນໂລຊີຕາເວັນອອກ ຈັນທະບູລີ ແຄມປັດສ໌ປະເທດໄທ ຍັງຊີ້ໃຫ້ເຫັນວ່າ ການດໍາເນີນງານຂອງທຸລະກິດຟາມໄກ່ພົບວ່າຂະບວນການຜະລິດຕິດພັນກັບລາຍຈ່າຍທາງການເງິນ ເພື່ອຄອບຄຸມຕົ້ນທຶນການຜະລິດ ແລະ ຮັກສາຜົນຕອບແທນຂອງທຸລະກິດໄວ້. ການຄົ້ນຄວ້າຂອງ Suriyajun (2016) ພົບວ່າ ຕົ້ນທຶນສ່ວນຫຼາຍແມ່ນຈະຢູ່ໃນຂະບວນການຜະລິດອາຫານໃນສັດສ່ວນທີ່ເປັນຕົ້ນທຶນຜັນແປເຊິ່ງປະກອບດ້ວຍຄ່າວັດຖຸດິບອາຫານລຽ້ງໄກ່ໄຂ່

ແລະ ຄ່າໃຊ້ຈ່າຍໃນຂະ ບວນການຜະລິດ. ດ້ານຂະບວນການໃນການດຳເນີນງານແຕ່ລະຂັ້ນຕອນມີຜົນຕໍ່ການດຳເນີນທຸລະກິດ ເຊິ່ງສອດຄ່ອງກັບງານວິໄຈຂອງ Vongmanichanh (2020). ນອກ ຈາກປັດໄຈທີ່ກ່າວມາຂ້າງເທິ່ງນັ້ນ ງານວິໄຈຂອງ Hoongsengpha (2020) ຍັງສະແດງໃຫ້ເຫັນວ່າ ປັດໄຈດ້ານການບໍລິຫານຈັດການອົງກອນ ຍັງເປັນອີກປັດໄຈໜຶ່ງທີ່ສົ່ງຜົນໂດຍກົງຕໍ່ຄວາມສຳເລັດຂອງທຸລະກິດຂະໜາດ ນ້ອຍໃນນະຄອນຫຼວງພະບາງ.

ປັດໄຈພາຍນອກ ທີ່ປະກອບດ້ວຍ ການເມືອງ, ເສດຖະກິດ, ສັງຄົມ ແລະ ວັດທະນະທຳ ແລະ ເຕັກໂນໂລຊີ ມີຄວາມສຳພັນກັບຜົນຂອງການດຳເນີນທຸລະກິດ ແຕ່ບໍ່ມີຜົນຕໍ່ການດຳເນີນທຸລະກິດຟາມໄກ່ໄຂ່, ເຊິ່ງມັນບໍ່ສອດຄ່ອງກັບງານວິໄຈຂອງ Peongthong (2014) ໄດ້ກ່າວໄວ້ວ່າ ປັດໄຈພາຍນອກອົງກອນ ມີອິດທິຜົນຕໍ່ການດຳເນີນທຸລະກິດຫຼາຍ, ເພາະອົງກອນບໍ່ສາມາດກຳນົດປັດໄຈພາຍນອກໄດ້, ອົງກອນຈຶ່ງຕ້ອງພະຍາກອນ ຫຼື ມີການວາງແຜນສຳຮອງສຳລັບແກ້ໄຂບັນຫາສຳລັບອານາຄົດ ຈຶ່ງເປັນການລົດຄວາມສ່ຽງໃນການດຳເນີນທຸລະກິດລົງ ແລະ ເຮັດໃຫ້ອົງກອນມີຈຸດຢືນ ມີຄວາມໝັ້ນຄົງ ຄວາມໄດ້ປຽບຄູ່ແຂ່ງໃນອຸດສາຫະກຳດຽວກັນ ສົ່ງຜົນໃຫ້ອົງກອນມີຄວາມໜ້າເຊື່ອຖື ແລະ ເປັນທີ່ຍອມຮັບຂອງຜູ້ບໍລິໂພກເພີ່ມຂຶ້ນ ແລະ Tangnarumit (2015). ຜູ້ປະກອບທຸລະກິດຄວນໃຫ້ຄວາມສຳຄັນກັບປັດໄຈພາຍນອກຢ່າງສະໝ່ຳສະເໝີເພື່ອໃຫ້ຜົນການດຳເນີນງານຂອງທຸລະກິດມີປະສິດທິພາບ ແລະ ກໍ່ໃຫ້ເກີດຄວາມສຳເລັດໃນການປະກອບທຸລະກິດຫຼາຍຂຶ້ນ.

## 5. ສະຫຼຸບ

ຜູ້ປະກອບການທຸລະກິດຟາມໄກ່ໄຂ່ທີ່ເປັນກຸ່ມຕົວຢ່າງ ໃນການວິໄຈຄັ້ງນີ້ ລ້ວນແລ້ວແຕ່ເປັນຜູ້ທີ່ມີປະສົບການໃນການດຳເນີນທຸລະກິດ 5 - 10 ປີ, ມີຊ່ວງອາຍຸ 46 - 55 ປີ ທີ່ສາມາດຕັດສິນໃຈບັນຫາຕ່າງໆໃນການດຳເນີນກິດຈະການໄດ້, ມີທຶນໝູນວຽນທຸລະກິດລະຫວ່າງ 50 ລ້ານ - 100 ລ້ານກີບ ແລະ ລາຍຮັບສະເລ່ຍຕໍ່ເດືອນ 50 ລ້ານ - 100 ລ້ານກີບ ທີ່ມີແຫຼ່ງທຶນໃນການດຳເນີນທຸລະກິດສ່ວນຫຼາຍມາຈາກສິນເຊື່ອເງິນກູ້ດອກເບັ້ຍຕ່ຳຈາກທະນາຄານ. ໂດຍທົ່ວໄປແລ້ວການດຳເນີນທຸລະກິດຢູ່ທ້ອງຖິ່ນແມ່ນອາໃສຄອບຄົວ, ຍາດພີ່ນ້ອງ, ລູກຫຼານຊ່ວຍດຳເນີນກິດຈະການ, ອາໃສປະສົບປະການຈາກຮຸ່ນສູ່ຮຸ່ນ, ພໍ່ຫາລູກ ແລະ ແບບຄວາມຊິນເຄີຍທີ່ສືບທອດກັນມາ.

ປັດໄຈພາຍໃນມີພຽງບາງປັດໄຈເທົ່ານັ້ນທີ່ມີຜົນຕໍ່ການດຳເນີນທຸລະກິດຟາມໄກ່ໄຂ່ເປັນຕົ້ນແມ່ນການຜະລິດ ແລະ ການເງິນ ເຊິ່ງທັງສອງເປັນຂະບວນການທີ່ຕິດພັນກັນໃນຮູບແບບລາຍຈ່າຍເຊັ່ນ: ຄ່າແຮງງານ, ບຳລຸງຮັກສາ ແລະ ຈັດຊື້ອາຫານສັດ.

ປັດໄຈພາຍນອກບໍ່ມີຜົນຕໍ່ການດຳເນີນທຸລະກິດຟາມໄກ່ໄຂ່, ໃນຄວາມເປັນຈິງແລ້ວທຸລະກິດຢູ່ຂັ້ນທ້ອງຖິ່ນກໍ່ໄດ້ຮັບຜົນກະທົບຈາກປັດໄຈພາຍນອກບາງປັດໄຈເທົ່ານັ້ນ ແຕ່ບໍ່ເຖິງຂັ້ນມີຜົນຕໍ່ການດຳເນີນທຸລະກິດ, ເຖິງຢ່າງໃດກໍ່ຕາມຜູ້ປະກອບການຕ້ອງໃຫ້ຄວາມສຳຄັນກັບປັດໄຈພາຍນອກຢ່າງສະໝ່ຳສະເໝີ ເພາະມັນກວມເອົາດ້ານການເມືອງ, ເສດຖະກິດ, ສັງຄົມ ແລະ ວັດທະນະທຳ ແລະ ເຕັກໂນໂລຊີ ເພື່ອປັບສະພາບທຸລະກິດໄປຕາມສະຖານະການ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 8. ເອກະສານອ້າງອີງ

ກະຊວງອຸດສາຫະກຳ ແລະ ການຄ້າ, ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ. (2017). ອຸປະສັກ ແລະ ສິ່ງທ້າທາຍຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນດຳລັດ 253/ນຍ ວ່າດ້ວຍແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016 – 2020, ໜ້າທີ 7 - 10.

ກະຊວງກະສິກຳ ແລະ ປ່າໄມ້ ປີ 2015. ຄູ່ມືຂອງອາຊຽນກ່ຽວກັບການສົ່ງເສີມການລົງທຶນຢ່າງມີຄວາມຮັບຜິດຊອບໃນດ້ານອາຫານ, ໜ້າທີ 18.

ກະຊວງກະສິກຳ ແລະ ປ່າໄມ້ ປີ 2018. ຍຸດທະສາດພັດທະນາກະສິກຳຮອດປີ 2025 ແລະ ວິໄສທັດຮອດປີ 2030, ໜ້າທີ 12.

ພະແນກແຜນການ ແລະ ການລົງທຶນ ແຂວງຫຼວງພະບາງ ປີ 2021. ແຜນພັດທະນາເສດຖະກິດ ແລະ ສັງຄົມ 5ປີ ຄັ້ງທີ IX (2021 – 2025) ຂອງແຂວງຫຼວງພະບາງ , ໜ້າທີ 31,41 - 43

Armstrong. M. (1999). Personal Management. Praha: Grada.

Cronbach, L.J. (1970). Essential of Psychological Testing. New York: Harper & Row.

Hoongsengpha et al. (2020). The Success Factors of SME Business in Luang Prabang Capital. Souphanouvong Journal: Multi-disciplinary Research of Souphanouvong University Vol. 6, Issue 1. Page: 154 – 161.

Jirawat Suriyajun (2016). Master of Science (Agri-business), Cost and risk Evaluation of In-housing and Outsourcing Layer Feed Production: A case study of Wattana farm. Chiang Mai University Thailand.

Krejie, R.V. and Morgan, D.W. (1970). Determining Sample Size for Research Activities. Educational and Psychological Measurement, 30 (3), 607-610.

Lao statistics bureau. The main report of the third national agricultural statistics survey in 2019/2020. Issue 1. Part 2: Main results of the farm household survey. pp 14 – 26.

McManus, J., Li, M. and Moitra, D. (2007). China and India: Opportunities and threats for the global software industry. Oxford: Chandos Publishing.

Novakova. M. (2011). Reliability of approximate function for a strength analysis of rotary shaping machine rollers, in: Operation and diagnostics of machines and production systems operational states, pp. 149-154.

Ministry of Planning and Investment. Lao statistics bureau. A summery of the absence practice economic and social in 2021. www.lsb.gov.la

Ministry of Agriculture and Forestry. (2020). Information for development. http://www.lao44.org

Naruemon Peongthong (2014). Internal and External factors related to the export of tire industry in Thailand. (Thesis) Ratsamongkol University of Technology Thanyaburi Thailand.

Nitu-Antonie, R.D. and Feder, E.S. (2015). The role of Economic Academic Education on Entrepreneurial Behaviour. Amfiteatru Econ. J, 17, 261-276.

O.O. Adebayo and R.G. Adeola (2005). Socio-Economics Factors Affecting Poultry Farmer in Ejigbo Local Government Area of Osun State. Agricultural Economics and Extension Department, Ladoke Akintola University of Technology, Ogbomoso, Nigeria, Africa.

Siriya Tangnaruemit (2015). Factors related to the success of small and medium businesses in Prachuap Khiri Khan Province. (Thesis) Silapakorn University Thailand.

VONGMANICHANH et al. (2020). The impact of Business Innovation Affecting the Performance of Business Service Sector in Luang Prabang. Souphanouvong Journal: Multi-disciplinary Research of Souphanouvong University Vol. 6, Issue 3. Page: 1353 – 1362.

Yingyos Thipsrirach (2013). A Case Study of Poultry Department at Rajamangala University of Technology Tawan-ok Chanthaburi Campus Thailand.